# *Mekong River Commission*

P.O. Box 6101, Vientiane 01000, Lao PDR
Telephone: (856-21) 263 263 Facsimile: (856-21) 263 264
Email: mrcs@mrcmekong.org Website: www.mrcmekong.org


**MRC No. 11/08**

## ສະຫຼຸບການຈັດຕັ້ງປະຕິບັດແຜນງານການນຳໃຊ້ນ້ຳ

**Vientiane, Lao PDR**
**16 June, 2008**

ເຖິງວ່າແຜນງານການນຳໃຊ້ນ້ຳຂອງຄະນະກຳມາທິການແມ່ນ້ຳຂອງສາກົນທີ່ໄດ້ຈັດຕັ້ງປະຕິບັດມາເປັນເວລາ 8 ປີ ໃດ້ ສິ້ນສຸດລົງຢ່າງເປັນທາງການ ບັນດາປະເທດພາຄີ ແລະ ກອງເລຂາຄະນະກຳມາທິການແມ່ນ້ຳຂອງສາກົນ ໄດ້ສັນຍາ ບົນພື້ນຖານຜົນສຳເລັດທີ່ຍາດມາໄດ້ນັ້ນວ່າ ຈະພະຍາຍາມສືບຕໍ່ວຽກງານການຄຸ້ມຄອງຊັບພະຍາກອນນ້ຳແບບຄົບວົງຈອນ ໃນອ່າງແມ່ນ້ຳຂອງຕອນລຸ່ມ.

ແຜນງານການນຳໃຊ້ນ້ຳ ຊຶ່ງແມ່ນນຶ່ງໃນແຜນງານຫລັກຂອງຄະນະກຳມາທິການແມ່ນ້ຳຂອງສາກົນ ນັບຕັ້ງແຕ່ປີ 2000 ໃດ້ເຮັດໃຫ້ບັນດາປະເທດພາຄີແມ່ນ້ຳຂອງສາມາດຮ່າງ ແລະ ຕົກລົງເຫັນດີເອກກະພາບນຳກັນໃນລະບຽບການຕ່າງໆ ໃນການນຳໃຊ້ນ້ຳ ເຊັ່ນ ລະບຽບການທາງດ້ານການແລກປ່ຽນຂໍ້ມູນຂ່າວສານ, ການຕິດຕາມການນຳໃຊ້ນ້ຳທາງດ້ານປະລິມານ ແລະ ຄຸນນະພາບ, ການຮັກສາລະດັບນ້ຳໄຫລຂອງແມ່ນ້ຳຂອງ ແລະ ອື່ນໆ. ບັນດາລະບຽບການດັ່ງກ່າວນີ້ໃດ້ສ້າງເງື່ອນໄຂ ໃຫ້ແກ່ບັນດາປະເທດສະມາຊິກຂອງຄະນະກຳມາທິການແມ່ນ້ຳຂອງສາກົນ ຮ່ວມມືກັນທາງດ້ານເຕັກນິກໃນການນຳໃຊ້ນ້ຳຮ່ວມກັນໃນອ່າງແມ່ນ້ຳຂອງ. ນອກຈາກນີ້ ແຜນງານດັ່ງກ່າວ ຍັງໃດ້ສ້າງລະບຽບການໃນການແຈ້ງໃຫ້ກັນຊາບ, ການ ປຶກສາຫາລື ແລະ ຕົກລົງເຫັນດີນຳກັນຕໍ່ກັບບັນດາໂຄງການ ທີ່ມີທ່າແຮງທີ່ຈະເກີດຜົນກະທົບ ໃນບັນດາແມ່ນ້ຳສາຂາ ແລະ ຕາມລຳນ້ຳຂອງ ແລະ ກໍຍັງໃດ້ສ້າງກອບໃນການຊ່ວຍເຫລືອໃນການຕັດສິນໃຈ ຊຶ່ງຈະຊ່ວຍໃຫ້ລັດຖະບານຂອງບັນດາປະເທດພາຄີສາມາດຕັດສິນໃຈບົນພື້ນຖານຂອງຂໍ້ມູນທາງດ້ານວິທະຍາສາດ ແລະ ເສດຖະກິດສັງຄົມທີ່ຊັດເຈນ.

ຜ່ານການປະກາດປິດໂຄງການຢ່າງເປັນທາງການ ພາຍຫລັງທີ່ໄດ້ມີການປຶກສາຫາລືກັນກ່ຽວກັບບັນຫາ, ຂໍ້ຄົງຄ້າງ ແລະ ຜົນສຳເລັດ ໃນຄັ້ງນີ້, ທ່ານຫົວໜ້າກອງເລຂາຄະນະກຳມາທິການແມ່ນ້ຳຂອງສາກົນ ທ່ານ ເຈຣາມີ ເບີຣດ ໃດ້ກ່າວວ່າ ຄຸນຄ່າທີ່ແທ້ຈິງຂອງຜົນສຳເລັດຈະປະກົດເດັ່ນຂຶ້ນໃນຫລາຍປີຕໍ່ໜ້າ, *"ຜົນໃດ້ຮັບຂອງແຜນງານຈະຖືກນຳໃຊ້ເຂົ້າໃນການຄຸ້ມຄອງຊັບພະຍາກອນນ້ຳໃນອ່າງແມ່ນ້ຳຂອງບົນພື້ນຖານຂອງສັນຕິພາບ, ການຮ່ວມມື ແລະ ຄວາມຍືນຍົງ"*

ທ່ານ ເບີຣດ ໃດ້ກ່າວຕໍ່ບັນດາແຂກທີ່ມາໂຮມກັນ ຊຶ່ງແມ່ນວິຊາການ ແລະ ນັກວາງແຜນຈາກບັນດາປະເທດພາຄີແມ່ນ້ຳຂອງ, ຜູ້ຕາງໜ້າຄູ່ຮ່ວມງານ ແລະ ນັກຂ່າວ ວ່າ ແຜນງານການນຳໃຊ້ນ້ຳຍັງມີບັນດາໜ້າວຽກທີ່ສຳຄັນຈຳນວນນຶ່ງຍັງບໍ່ທັນສຳເລັດ ທີ່ຄະນະກຳມາທິການແມ່ນ້ຳຂອງຈຳເປັນຈະຕ້ອງໃດ້ສືບຕໍ່ໃນການບັນລຸເປົ້າໝາຍຂອງຕົນໃນວຽກງານການຄຸ້ມຄອງຊັບພະຍາກອນນ້ຳແບບຄົບວົງຈອນຜ່ານບັນດາໂຄງການໃໝ່ ແລະ ບັນດາໂຄງການທີ່ມີແລ້ວເຊັ່ນ ແຜນງານການວາງແຜນພັດທະນາອ່າງ, ແຜນງານການ ຄຸ້ມຄອງຂໍ້ມູນ ຂ່າວສານ ແລະ ອື່ນໆ.